**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພາຍໃນ ເລກທີ 08 /ພນ

ນະຄອນຫຼວງວຽງຈັນ, ວັນທີ 16 ສິງຫາ 2021

# ຄຳແນະນຳ
# ກ່ຽວກັບການຜັນຂະຫຍາຍ ດຳລັດວ່າດ້ວຍຕາປະທັບ

— ອີງຕາມ ດຳລັດ ວ່າດ້ວຍຕາປະທັບ (ສະບັບປັບປຸງ) ເລກທີ 322/ລບ, ລົງວັນທີ 01 ຕຸລາ 2018;
— ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພາຍໃນ (ສະບັບປັບປຸງ) ເລກທີ 97/ນຍ, ລົງວັນທີ 09 ກຸມພາ 2017;
— ອີງຕາມ ໜັງສືສະເໜີ ຂອງ ກົມພັດທະນາການບໍລິຫານລັດ ສະບັບເລກທີ 204/ກພລ, ລົງວັນທີ 04 ສິງຫາ 2021.

ໃນໄລຍະຜ່ານມາ ອົງການຈັດຕັ້ງຕ່າງໆ ຂອງລັດຖະບານ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດດຳລັດ ຂອງລັດຖະບານ ສະບັບເລກທີ 218/ລບ, ລົງວັນທີ 19 ກໍລະກົດ 2005 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ໄດ້ເປັນຢ່າງດີ ແລະ ເປັນບ່ອນອີງໃນການເຄື່ອນໄຫວວຽກງານດັ່ງກ່າວຕະຫຼອດມາ ເພື່ອຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ມາຮອດປີ 2018 ລັດຖະບານ ຈຶ່ງໄດ້ອອກດຳລັດວ່າດ້ວຍຕາປະທັບ ສະບັບເລກທີ 322/ລບ ເພື່ອປ່ຽນແທນດຳລັດ 218/ນຍ ແຕ່ຜ່ານການຈັດຕັ້ງປະຕິບັດຜ່ານມາເຫັນວ່າ ຍັງມີຫຼາຍພາກສ່ວນ ຍັງບໍ່ທັນເຂົ້າໃຈເປັນເອກະພາບເທື່ອ. ສະນັ້ນ, ເພື່ອເຮັດໃຫ້ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ມີຄວາມເຂົ້າໃຈເປັນເອກະພາບ ແລະ ສະດວກໃນການຈັດຕັ້ງປະຕິບັດດຳລັດວ່າດ້ວຍຕາປະທັບ ຈຶ່ງມີຄວາມຈຳເປັນຕ້ອງໄດ້ອອກຄຳແນະນຳ ອະທິບາຍເພີ່ມຕື່ມ.

## ລັດຖະມົນຕີກະຊວງພາຍໃນ ອອກຄຳແນະນຳ:

## I. ຈຸດປະສົງ

— ເພື່ອອະທິບາຍ, ແນະນຳແຈ້ງຕື່ມ ເນື້ອໃນບາງມາດຕາ ຂອງ ດຳລັດວ່າດ້ວຍຕາປະທັບ ສະບັບເລກທີ 322/ລບ, ລົງວັນທີ 01 ຕຸລາ 2018 ແນໃສ່ເຮັດໃຫ້ມີຄວາມເຂົ້າໃຈ ທີ່ຖືກຕ້ອງ, ຊັດເຈນ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນການກຳນົດຮູບແບບ, ສີນ້ຳມຶກ, ການຖອນຕາປະທັບຄືນ, ການປະສານງານ, ການຕິດຕາມກວດກາ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ;
— ເພື່ອຫຼຸດຜ່ອນຂັ້ນ-ຂອດການບໍລິຫານ ແລະ ກົນໄກການຄຸ້ມຄອງໃຫ້ກະທັດຮັດ-ອະນຸມັດວ່ອງໄວຫຼາຍຂຶ້ນ;

- ເພື່ອເປັນບ່ອນອີງ ໃຫ້ແກ່ບັນດາອົງການຄຸ້ມຄອງວຽກງານຕາປະທັບ ໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ໃຫ້ຖືກຕ້ອງຕາມລະບຽບຫຼັກການຢ່າງເຂັ້ມງວດ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

## II. ແນະນຳເພີ່ມເຕີມບາງເນື້ອໃນຂອງດຳລັດ

### 1. ໝວດທີ 1 ບົດບັນຍັດທົ່ວໄປ (ມາດຕາ 5 ຂອບເຂດການນຳໃຊ້)

ດຳລັດວ່າດ້ວຍຕາປະທັບ ບໍ່ໄດ້ຄຸ້ມຄອງຕາປະທັບ ຂອງ ອົງການຈັດຕັ້ງພັກ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຊຶ່ງແມ່ນຄະນະຈັດຕັ້ງສູນກາງພັກ ເປັນຜູ້ຄຸ້ມຄອງ.

ສ່ວນຕາປະທັບ ຂອງ ສຳນັກງານຜູ້ຕາງໜ້າ ຂອງຕ່າງປະເທດ, ບັນດາອົງການຈັດຕັ້ງສາກົນ ແລະ ບັນດາອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ (INGOs) ທີ່ເຄື່ອນໄຫວວຽກງານປະຈຳຢູ່ ສ.ປ.ປ. ລາວ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບຫຼັກການທີ່ກຳນົດ, ແຕ່ດ້ານຮູບແບບ, ຂະໜາດ ແລະ ເນື້ອໃນ ຕາປະທັບ ແມ່ນອີງຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ ບົນພື້ນຖານການຢັ້ງຢືນຮັບຮອງ ຂອງ ກະຊວງການຕ່າງປະເທດ ແຫ່ງ ສ.ປ.ປ. ລາວ.

### 2. ໝວດທີ 2 ຮູບແບບ, ສີນ້ຳມຶກ, ຂະໜາດ ແລະ ເນື້ອໃນຕາປະທັບ

2.1 ຮູບແບບຕາປະທັບ ຂອງ ອົງການຈັດຕັ້ງເສດຖະກິດ ມາດຕາ 3 ຂໍ້ 5 ວິສາຫະກິດລັດ, ວິສະຫະກິດປະສົມທີ່ມີທຶນຂອງລັດ ສິບຫ້າສ່ວນຮ້ອຍ (15%) ຂຶ້ນໄປ, ກຸ່ມທຸລະກິດ, ສະຫະພັນທຸລະກິດ ທີ່ໄດ້ຈົດທະບຽນ ແລະ ມີໃບທະບຽນວິສາຫະກິດ ເຄື່ອນໄຫວດຳເນີນທຸລະກິດ ແມ່ນໃຫ້ໃຊ້ຮູບແບບ ຕາແປດລ່ຽມ;

2.2 ຮູບແບບຕາປະທັບ ແລະ ສີນ້ຳມຶກ ຂອງອົງການຈັດຕັ້ງສັງຄົມ ມາດຕາ 3 ຂໍ້ 6 ສະຫະສະມາຄົມ, ສະຫະພັນ, ສະໂມສອນ, ສະມາຄົມ ແລະ ມູນນິທິ ທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນ ແລະ ມີໃບທະບຽນສະມາຄົມເຄື່ອນໄຫວຊ່ວຍເຫຼືອສັງຄົມໂດຍບໍ່ຫວັງຜົນກຳໄລ, ສະມາຄົມທຸລະກິດ ແລະ ສະມາຄົມຊາວຄ້າຂາຍ ແມ່ນໃຫ້ນຳໃຊ້ຮູບແບບຕາມົນ ແລະ ນ້ຳມຶກສີຟ້າ;

2.3 ໂຄງການ ຫຼື ການຈັດຕັ້ງອື່ນ ທີ່ລະບຸຢູ່ໃນມາດຕາ 8 ຂໍ້ 9 ໝາຍເຖິງ ໂຄງການຂອງລັດ, ຄະນະກຳມະການລະດັບຊາດ ຊຶ່ງແມ່ນພະນັກງານລັດ ເປັນຜູ້ບໍລິຫານໂຄງການ ແລະ ມີສະພາບໍລິຫານໂຄງການ ຫຼືອົງການຈັດຕັ້ງດັ່ງກ່າວ ແມ່ນອະນຸຍາດໃຫ້ນຳໃຊ້ນ້ຳມຶກສີແດງ, ສ່ວນໂຄງການ ຫຼື ການຈັດຕັ້ງອື່ນ ທີ່ບໍ່ແມ່ນຂອງອົງການລັດ ແມ່ນນຳໃຊ້ນຳມຶກສີຟ້າເທົ່ານັ້ນ ແລະ ຮູບແບບຕາປະທັບ ຕາມດຳລັດກຳນົດ;

2.4 ມາດຕາ 9 ຂໍ້ 2.3 ກ່ຽວກັບເນື້ອໃນຕາປະທັບ ຂອງກຳລັງປ້ອງກັນຄວາມສະຫງົບ ທີ່ມີຫຼາຍອົງການຈັດຕັ້ງຖັດຕົນ ໃຫ້ກຳນົດເອົາຊື່ອົງການຈັດຕັ້ງທີ່ຂຶ້ນກັບໃກ້ຄຽງອົງການຈັດຕັ້ງຂອງຕົນ ໃສ່ໃນຕາປະທັບວົງນອກເບື້ອງເທິງ;

2.5 ມາດຕາ 10 ຂີດໜ້າ 1 ວົງນອກເບື້ອງເທິງ: ຊື່ອົງການຈັດຕັ້ງລັດ ທີ່ອອກໃບທະບຽນອະນຸຍາດດຳເນີນທຸລະກິດ ການໃສ່ຊື່ອົງການທີ່ອອກທະບຽນ ຫຼື ໃນນາມຂະແໜງອຸດສາຫະກຳ ແລະ ການຄ້າ ໃຫ້ເຂົ້າໃຈວ່າ "ແມ່ນໃນນາມຜູ້ອອກໃບທະບຽນວິສາຫະກິດເທົ່ານັ້ນ, ບໍ່ແມ່ນໃນນາມຂະແໜງການຄຸ້ມຄອງ ຫຼື ຂະແໜງການອອກໃບອະນຸຍາດດຳເນີນທຸລະກິດ";

2.6 ມາດຕາ 11 ວັກສຸດທ້າຍ ທີ່ລະບຸວ່າ: "ສຳລັບເນື້ອໃນຕາປະທັບ ຂອງ ການຈັດຕັ້ງສາສະໜາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ" ແມ່ນໃຫ້ປະຕິບັດຕາມເນື້ອໃນໝວດທີ 2 ມາດຕາ 10 ຂອງ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສ.ປ.ປ. ລາວ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ບົນພື້ນຖານທຳມະນູນ ຂອງ ສາສະໜາ ແລະ ນິຕິກຳໃດໜຶ່ງ ທີ່ຜ່ານການເຫັນດີ ຂອງກະຊວງພາຍໃນ;

2.7 ການຂໍອະນຸຍາດຄວັດຕາປະທັບ ຂອງ ອົງການຈັດຕັ້ງສາສະໜາ (ມາດຕາ 14 ຂໍ້ 2 ຂອງດຳລັດ) ໃຫ້ຖືເອົາຂໍ້ຕົກລົງຂອງກະຊວງພາຍໃນ ວ່າດ້ວຍການຮັບຮອງເອົາທຳມະນູນ ຂອງການຈັດຕັ້ງສາສະໜາແທນຂໍ້ຕົກລົງວ່າດ້ວຍການສ້າງຕັ້ງການຈັດຕັ້ງສາສະໜາ;

2.8 ອົງການຈັດຕັ້ງສາສະໜາທີ່ເຄື່ອນໄຫວ ໃນ ສ.ປ.ປ. ລາວ ກ່ອນການຂໍອະນຸຍາດ ແລະ ນຳໃຊ້ຕາປະທັບ ຂອງອົງການຈັດຕັ້ງສາສະໜາຕົນ ຕ້ອງປະກອບເອກະສານຂໍອະນຸຍາດໃຫ້ຄົບຖ້ວນ ພ້ອມດ້ວຍຮູບແບບ ແລະເນື້ອໃນຕາປະທັບຂອງຕົນ ສະເໜີຫາກະຊວງພາຍໃນ ເພື່ອຄົ້ນຄວ້າມີຄຳເຫັນເປັນເອກະພາບ ຢ່າງເປັນລາຍລັກອັກສອນ ກ່ອນການສະເໜີກະຊວງປ້ອງກັນຄວາມສະຫງົບ ຄວັດຕາປະທັບ ຕາມລະບຽບການ;

2.9 ນ້ຳມຶກ ຕາປະທັບ ຂອງ ໂຮງຮຽນປະລິຍັດຕິທຳ, ວິທະຍາໄລສົງ, ຄະນະສຶກສາສົງ ແລະ ໂຮງຮຽນສົງ ຂັ້ນຕ່າງໆຊຶ່ງຖືວ່າ ເປັນໂຮງຮຽນ ຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງຂະແໜງສຶກສາທິການ ແລະ ກິລາ ແມ່ນອະນຸຍາດໃຫ້ນຳໃຊ້ສີແດງຄືເກົ່າ, ສ່ວນຕາປະທັບ ຂອງອົງການສາສະໜາ (ຕາປະທັບຂອງວັດ, ຕາປະທັບເຈົ້າຄະນະຂັ້ນເມືອງ ແລະ ຂັ້ນແຂວງ, ຕາປະທັບຂອງອົງການຈັດຕັ້ງສາສະໜາ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ), ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງເສດຖະກິດ ແລະ ອົງການຈັດຕັ້ງສາກົນ ທີ່ປະຈຳຢູ່ ສປປ ລາວ ແມ່ນໃຊ້ນ້ຳມຶກສີຟ້າ.

## 3. ໝວດທີ 3 ເງື່ອນໄຂການນຳໃຊ້, ການຂໍອະນຸຍາດຄວັດ, ການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ

3.1 ອົງການຈັດຕັ້ງໃດທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມລະບຽບກົດໝາຍ ລ້ວນແຕ່ມີສິດຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ບົນພື້ນຖານການຈັດຕັ້ງລັດຂັ້ນເທິງຖັດຕົນເຫັນດີ ແລະ ນຳໃຊ້ເຂົ້າໃນວຽກງານລັດຖະການເທົ່ານັ້ນ;

3.2 ເມື່ອມີການປັບປຸງເນື້ອໃນຕາປະທັບ (ມາດຕາ 15 ຂອງດຳລັດ) ເນື່ອງຈາກ ສາເຫດໃດໜຶ່ງ ໂດຍມີການປັບປຸງ, ປ່ຽນຊື່, ໂຮມ, ຍຸບເລີກການຈັດຕັ້ງ ຫຼື ສຳເລັດໂຄງການແລ້ວ ຕ້ອງໄດ້ສົ່ງຕາປະທັບເກົ່າ ໃຫ້ຂະແໜງປ້ອງກັນຄວາມສະຫງົບ ເພື່ອນຳໄປທຳລາຍ ຕາມລະບຽບການ;

3.3 ການນຳໃຊ້ຕາປະທັບເກົ່າໄປເຄື່ອນໄຫວວຽກງານ ຫຼື ຍັ້ງຢືນຕຳແໜ່ງເກົ່າ ເພື່ອເອົາປະໂຫຍດໃດໜຶ່ງ ຖືເປັນການລະເມີດກົດໝາຍອາຍາ ແລະ ຈະຖືກດຳເນີນຄະດີ ຕາມສະຖານເບົາ ຫຼື ໜັກ.

## 4. ໝວດທີ 4 ຂໍ້ຫ້າມ

4.1 ນອກຈາກ ບັນດາຂໍ້ຫ້າມ ທີ່ໄດ້ກຳນົດໃນ ມາດຕາ 18 ຂອງ ດຳລັດ ວ່າດ້ວຍຕາປະທັບ ແມ່ນຫ້າມນຳເອົາຕາປະທັບອອກຈາກອົງການຈັດຕັ້ງ ຫຼື ນຳໄປໃຊ້ບ່ອນອື່ນ ກ່ອນໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກຂັ້ນເທິງຖັດຕົນ;

4.2 ຫ້າມບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ກຳນົດຕາປະທັບ ຂອງຂະແໜງການຕົນໃສ່ໃນກົດໝາຍ ຫຼື ນິຕິກຳ ໃຕ້ກົດໝາຍ. ຖ້າຫາກມີຄວາມຈຳເປັນຢາກກຳນົດເຂົ້າໃນກົດໝາຍ ຕ້ອງໄດ້ຜ່ານການຄົ້ນຄວ້າ ເຫັນດີເປັນເອກະພາບນຳ ກະຊວງພາຍໃນ ສາກ່ອນ;

4.3 ຫ້າມພະນັກງານ-ລັດຖະກອນ ນຳໃຊ້ຕາປະທັບສີ່ລ່ຽມ ເຂົ້າໃນການເຊັນຢັ້ງຢືນຕຳແໜ່ງບໍລິຫານ ຫຼື ໜ້າທີ່ວຽກງານທາງລັດຖະການ. (ຕົວຢ່າງ: ຕາປະທັບບັນດາພະແນກຂອງໂຮງໝໍ, ທະນາຄານ ແລະ ຂອງບັນດາພະແນກ, ຂະແໜງການອື່ນໆ).

**5. ໝວດທີ 5 ການຄຸ້ມຄອງວຽກງານຕາປະທັບ (ມາດຕາ 24 ຂໍ້ທີ 3)**

5.1 ນອກຈາກສິດ ແລະ ໜ້າທີ່ ທີ່ກຳນົດໃນມາດຕາ 21, 22, 23, 24 ແລະ ມາດຕາ 25 ຂອງດຳລັດແລ້ວ, ຂະແໜງພາຍໃນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຫາກການຈັດຕັ້ງໃດມີການປ່ຽນແປງ ຫຼື ປ່ຽນຊື່, ຍຸບເລີກ, ແຍກອອກຈາກກັນ, ໂຮມເຂົ້າກັນ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງເສດຖະກິດ...ພາກສ່ວນກ່ຽວຂ້ອງຕ້ອງໄດ້ສົ່ງຄືນໃບອະນຸຍາດນຳໃຊ້ ແລະຕາປະທັບໜ່ວຍເກົ່າ ແລ້ວສົ່ງໃຫ້ຂະແໜງປ້ອງກັນຄວາມສະຫງົບ ເພື່ອເປັນເຈົ້າການໃນການທຳລາຍຖິ້ມ;

5.2 ອົງການຄຸ້ມຄອງວຽກງານຕາປະທັບ ຫາກພົບເຫັນການກະທຳ ທີ່ເປັນການລະເມີດບັນດາຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນມາດຕາ 17 ແລະ ມາດຕາ 18 ຂອງດຳລັດວ່າດ້ວຍຕາປະທັບ ໃຫ້ແຈ້ງ ຫຼື ລາຍງານຂະແໜງການປ້ອງກັນຄວາມສະຫງົບ ເພື່ອກວດກາຕົວຈິງ ຫາກເຫັນວ່າ ບໍ່ຖືກຕ້ອງ ກໍ່ຕ້ອງຖອນ ແລະ ເກັບກູ້ຄືນຕາປະທັບດັ່ງກ່າວ ໃນທັນທີ;

5.3 ອົງການຄຸ້ມຄອງວຽກງານຕາປະທັບ ຕ້ອງປະສານງານສົມທົບ, ພົວພັນເຊິ່ງກັນ ແລະ ກັນ ກ່ຽວກັບການຄຸ້ມຄອງ, ການຕິດຕາມກວດກາ, ການຖອນຄືນຕາປະທັບ ແລະ ສະຫຼຸບລາຍງານ ວຽກງານຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ສາມເດືອນ, ຫົກເດືອນ ແລະ ປະຈຳປີ ໃຫ້ກະຊວງພາຍໃນຢ່າງເປັນປົກກະຕິເພື່ອລາຍງານລັດຖະບານ;

5.4 ກອງປະຊຸມສຳມະນາ ຂອງ ອົງການຄຸ້ມຄອງວຽກງານຕາປະທັບ ຈັດຂຶ້ນປີລະຄັ້ງ ເພື່ອສະຫຼຸບຕີລາຄາດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ, ບົດຮຽນຖອດຖອນໄດ້ ແລະ ຊອກຫາວິທີແກ້ໄຂໃນຕໍ່ໜ້າ ໂດຍແມ່ນກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າພາບຈັດກອງປະຊຸມຜັດປ່ຽນກັນ ໃນແຕ່ລະປີ ຫຼັງຈາກນັ້ນ ສັງລວມລາຍງານລັດຖະບານ ໃນແຕ່ລະໄລຍະ;

5.5 ອົງການຄຸ້ມຄອງວຽກງານຕາປະທັບ ແຕ່ລະຂະແໜງການ ຕ້ອງໄດ້ຂຶ້ນແຜນງົບປະມານ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຕາປະທັບ ໃນແຕ່ລະໄລຍະ ທີ່ນອນຢູ່ໃນພາລະບົດບາດໜ້າທີ່ການເມືອງ ຂອງຂະແໜງການຕົນ.

**6. ໝວດທີ 6 ການກວດກາ**

6.1 ການຕິດຕາມກວດກາ ໃຫ້ປະຕິບັດຕາມ ມາດຕາ 26, 27 ແລະ ມາດຕາ 28 ດຳລັດວ່າດ້ວຍຕາປະທັບ;

6.2 ຂັ້ນຕອນການຕິດຕາມກວດກາ ໃຫ້ປະຕິບັດ ດັ່ງນີ້:

- ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການໃນການຄົ້ນຄວ້າອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບລົງຕິດຕາມກວດກາ;
- ຄະນະຮັບຜິດຊອບລົງຕິດຕາມກວດກາ ປະກອບມີ: ຂະແໜງປ້ອງກັນຄວາມສະຫງົບ, ຂະແໜງພາຍໃນ, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການຕ່າງປະເທດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ຕາມໜ້າວຽກທີ່ກ່ຽວຂ້ອງ.

**7. ຂັ້ນຕອນການປະກອບເອກະສານ ເພື່ອຄວັດຕາປະທັບ**

ການສະເໜີຄວັດຕາປະທັບ ປະກອບດ້ວຍບັນດາເອກະສານພື້ນຖານ ດັ່ງນີ້:

7.1 ຂັ້ນສູນກາງ

- ມະຕິຕົກລົງ ຫຼື ນິຕິກຳໃດໜຶ່ງວ່າດ້ວຍການສ້າງຕັ້ງກົງຈັກ;
- ດຳລັດ ຫຼື ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ອົງການຈັດຕັ້ງກ່ຽວຂ້ອງ;

- ໜັງສືສະເໜີ ຂອງ ອົງການຈັດຕັ້ງທີ່ກ່ຽວຂ້ອງ ສະເໜີເຖິງກະຊວງປ້ອງກັນສະຫງົບ ເພື່ອຂໍອະນຸຍາດ ຄວັດຕາປະທັບ.

7.2 ຂັ້ນແຂວງ

- ການສະເໜີຄວັດຕາປະທັບ ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຫ້ອງວ່າການຂັ້ນແຂວງ ໃຫ້ສະເໜີຜ່ານພະແນກພາຍໃນ ຂັ້ນແຂວງ, ສ່ວນບັນດາພະແນກການຂັ້ນແຂວງ ແມ່ນສະເໜີເຖິງກະຊວງ ຫຼື ຂະແໜງການສາຍຕັ້ງ ຢູ່ຂັ້ນສູນກາງຂອງຕົນ ໂດຍບໍ່ຈຳເປັນຕ້ອງໄດ້ສະເໜີຜ່ານຂະແໜງພາຍໃນ;
- ມີມະຕິ ຫຼື ນິຕິກຳໃດໜຶ່ງວ່າດ້ວຍການສ້າງຕັ້ງກົງຈັກຂຶ້ນໃໝ່ ຄັດຕິດ;
- ມີຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ອົງການຈັດຕັ້ງດັ່ງກ່າວ;
- ອົງການຈັດຕັ້ງທີ່ກ່ຽວຂ້ອງ ສະເໜີເຖິງຂະແໜງການປ້ອງກັນຄວາມສະຫງົບ (ໂດຍຜ່ານກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ) ເພື່ອຂໍອະນຸຍາດຄວັດຕາປະທັບຕາມການແບ່ງຂັ້ນຄຸ້ມຄອງ.

7.3 ຂັ້ນເມືອງ, ຂັ້ນຮາກຖານ ຫຼື ອົງການຈັດຕັ້ງລັດໃດໜຶ່ງ

- ການສະເໜີຄວັດຕາປະທັບ ຂອງ ເຈົ້າເມືອງ, ເຈົ້ານະຄອນ, ຫົວໜ້າເທດສະບານ, ຫ້ອງວ່າການຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃຫ້ສະເໜີຜ່ານຫ້ອງການພາຍໃນຂັ້ນເມືອງ, ສ່ວນບັນດາຫ້ອງການຂັ້ນເມືອງ ແມ່ນສະເໜີເຖິງຂະແໜງການສາຍຕັ້ງຂອງຕົນໂດຍກົງ ໂດຍບໍ່ຈຳເປັນຕ້ອງໄດ້ສະເໜີຜ່ານຂະແໜງພາຍໃນ;
- ມີມະຕິ ຫຼື ນິຕິກຳໃດໜຶ່ງວ່າດ້ວຍການສ້າງຕັ້ງກົງຈັກຂຶ້ນໃໝ່ ຄັດຕິດ;
- ມີຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ອົງການຈັດຕັ້ງດັ່ງກ່າວ;
- ອົງການຈັດຕັ້ງທີ່ກ່ຽວຂ້ອງ ສະເໜີເຖິງຂະແໜງການປ້ອງກັນສະຫງົບ (ໂດຍຜ່ານກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ) ເພື່ອຂໍອະນຸຍາດຄວັດຕາປະທັບຕາມການແບ່ງຂັ້ນຄຸ້ມຄອງ.

7.4 ການຈັດຕັ້ງສາສະໜາ

- ການສະເໜີຄວັດຕາປະທັບ ຂອງ ການຈັດຕັ້ງສາສະໜາ ຂັ້ນສູນກາງ ແລະ ການຈັດຕັ້ງສາສະໜາທີ່ເຄື່ອນໄຫວກວມເອົາ 02 ແຂວງຂຶ້ນໄປ ໃຫ້ສະເໜີຜ່ານກະຊວງພາຍໃນ ຄົ້ນຄວ້າມີຄຳເຫັນ ກ່ອນນຳສະເໜີກະຊວງປ້ອງກັນຄວາມສະຫງົບ ພິຈາລະນາອະນຸມັດຄວັດຕາປະທັບ;
- ການສະເໜີ ຄວັດຕາປະທັບ ຂອງ ການຈັດຕັ້ງສາສະໜາທີ່ເຄື່ອນໄຫວພາຍໃນແຂວງ, ນະຄອນຫຼວງວຽງຈັນໃຫ້ສະເໜີພະແນກພາຍໃນແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການພາຍໃນ ຂັ້ນເມືອງ ຄົ້ນຄວ້າມີຄຳເຫັນ ແລ້ວນຳສະເໜີກະຊວງພາຍໃນ ເພື່ອນຳສະເໜີ ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາອະນຸມັດຄວັດຕາປະທັບ;
- ມີໜັງສືສະເໜີຂອງອົງການຈັດຕັ້ງຕົນ ໂດຍຜ່ານການຢັ້ງຢືນຈາກການຈັດຕັ້ງສາສະໜາ ທີ່ຄຸ້ມຄອງຖັດຕົນຕາມແຕ່ລະຂັ້ນ ຂອງການຄຸ້ມຄອງ;
- ຜ່ານການຢັ້ງຢືນຈາກອົງການປົກຄອງບ້ານ ຖ້າເປັນອົງການຈັດຕັ້ງສາສະໜາ ຂັ້ນຮາກຖານ;
- ມີນິຕິກຳວ່າດ້ວຍການອະນຸມັດສ້າງຕັ້ງອົງການຈັດຕັ້ງຕົນ ກໍລະນີສ້າງຕັ້ງໃໝ່.

7.5 ອົງການຈັດຕັ້ງສັງຄົມ

- ໜັງສືສະເໜີ ຂອງອົງການຈັດຕັ້ງສັງຄົມ ເຖິງຂະແໜງປ້ອງກັນຄວາມສະຫງົບ;
- ມີຂໍ້ຕົກລົງວ່າດ້ວຍການອະນຸມັດສ້າງຕັ້ງ ໂດຍອົງການຈັດຕັ້ງທີ່ມີສິດຄຸ້ມຄອງອະນຸມັດ;

- ມີໃບທະບຽນສະມາຄົມ, ກົດລະບຽບຂອງອົງການຈັດຕັ້ງສັງຄົມ ທີ່ໄດ້ຜ່ານການຮັບຮອງໂດຍອົງການຈັດຕັ້ງທີ່ມີສິດຄຸ້ມຄອງອະນຸມັດ.

7.6 ການຈັດຕັ້ງທາງເສດຖະກິດ

- ໜັງສືສະເໜີຂອງຫົວໜ່ວຍວິສາຫະກິດຕົນ ເຖິງຂະແໜງປ້ອງກັນຄວາມສະຫງົບ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ ການອະນຸມັດຄວັດຕາປະທັບ;
- ມີໃບທະບຽນວິສາຫະກິດ.

7.7 ໂຄງການຕ່າງໆ

- ໜັງສືສະເໜີຈາກອົງການຈັດຕັ້ງລັດຄຸ້ມຄອງໂດຍກົງ (ອົງການຈັດຕັ້ງທີ່ໂຄງການຂຶ້ນກັບ) ບົນພື້ນຖານການຢັ້ງຢືນຂອງອົງການປົກຄອງທ້ອງຖິ່ນ ບ່ອນໂຄງການຕັ້ງຢູ່;
- ມີຂໍ້ຕົກລົງ ຫຼື ນິຕິກຳ ວ່າດ້ວຍການອະນຸມັດສ້າງຕັ້ງໂຄງການຂອງຕົນ;
- ມີນິຕິກຳ ຫຼື ລະບຽບການໃດໜຶ່ງທີ່ຈຳເປັນ ສຳລັບການການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງໂຄງການດັ່ງກ່າວ.

7.8 ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນ ທີ່ເຄື່ອນໄຫວວຽກງານປະຈຳຢູ່ ສ.ປ.ປ. ລາວ

- ສຳນັກງານຜູ້ຕາງໜ້າ ຂອງຕ່າງປະເທດ (ສະຖານເອກອັກຄະລັດຖະທູດ/ຣາຊະທູດ, ສະຖານກົງສຸນ), ສຳນັກງານຜູ້ຕາງໜ້າ ຂອງອົງການຈັດຕັ້ງສາກົນ (ເຄືອຂ່າຍຂອງອົງການສະຫະປະຊາຊາດ) ແລະ ອົງການຈັດຕັ້ງສາກົນລະຫວ່າງລັດຖະບານ (ADB, WB, MRC..........) ທີ່ປະຈຳຢູ່ ສ.ປ.ປ. ລາວ ກ່ອນຈະນຳໃຊ້ຕາປະທັບຂອງຕົນ ຕ້ອງແຈ້ງສຳເນົາເອກະສານກ່ຽວຂ້ອງ ແລະ ຕົວຢ່າງຕາປະທັບ ໃຫ້ກະຊວງການຕ່າງປະເທດ ເພື່ອຊາບແລ້ວສາມາດນຳໃຊ້ຕາປະທັບໄດ້ເລີຍ ໂດຍບໍ່ໄປຜ່ານການຂໍອະນຸຍາດນຳໃຊ້ຕາປະທັບ ຈາກກະຊວງປ້ອງກັນຄວາມສະຫງົບ;
- ສຳລັບອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ **(INGOs)**, ໂຄງການ, ໜ່ວຍງານ ຫຼື ອົງການຈັດຕັ້ງອື່ນ ທີ່ຂຶ້ນກັບການຄຸ້ມຄອງຂອງບັນດາອົງການຈັດຕັ້ງສາກົນ ກ່ອນຈະນຳເອົາຕາປະທັບຂອງຕົນ ເຂົ້າມານຳໃຊ້ຢູ່ ສ.ປ.ປ. ລາວ ຕ້ອງແຈ້ງສຳເນົາຕົວຢ່າງຕາປະທັບ **(Specimens)** ໃຫ້ກະຊວງການຕ່າງປະເທດ, ພາກສ່ວນທີ່ກ່ຽວຂ້ອງ ຂອງຝ່າຍລາວຊາບກ່ອນ, ຫຼັງຈາກນັ້ນ, ໃຫ້ສຳນັກງານຜູ້ຕາງໜ້າ ຂອງປະເທດຕົນຢັ້ງຢືນ ເພື່ອປະກອບເອກະສານຂຶ້ນທະບຽນ ນຳໃຊ້ຕາປະທັບນຳກະຊວງປ້ອງກັນຄວາມສະຫງົບ;
- ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນໃດ ທີ່ຖືເອົາຕາປະທັບມານຳໃຊ້ຢູ່ ສ.ປ.ປ ລາວ ແລ້ວ, ແຕ່ບໍ່ທັນໄດ້ແຈ້ງໃຫ້ກະຊວງການຕ່າງປະເທດ ຫຼື ກະຊວງປ້ອງກັນຄວາມສະຫງົບເທື່ອນັ້ນ ໃຫ້ຮີບຮ້ອນປະກອບເອກະສານໃຫ້ຄົບຊຸດ ເພື່ອແຈ້ງສຳເນົາຕົວຢ່າງຕາປະທັບດັ່ງກ່າວ **(Specimens)** ໃຫ້ກະຊວງການຕ່າງປະເທດ ແລະ ໄປຂຶ້ນທະບຽນນຳໃຊ້ຕາປະທັບ ນຳກະຊວງປ້ອງກັນຄວາມສະຫງົບໃນເວລາອັນຄວນ.

ກໍລະນີ ທີ່ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ, ອົງການຈັດຕັ້ງທີ່ສັງກັດລັດ ຫຼື ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ **(INGOs)** ຫາກມີຄວາມຕ້ອງການຄວັດຕາປະທັບ ຢູ່ ສ.ປ.ປ. ລາວ ແມ່ນໃຫ້ປະຕິບັດຕາມ ມາດຕາ 14 ຂອງດຳລັດ, ແຕ່ກ່ອນນຳໃຊ້ ອົງການຈັດຕັ້ງດັ່ງກ່າວ

ຕ້ອງແຈ້ງສຳເນົາຕົວຢ່າງຕາປະທັບ **(Specimens)** ທີ່ໄດ້ຮັບການຄອັດຕາປະທັບແລ້ວນັ້ນ ໃຫ້ກະຊວງການຕ່າງປະເທດ ແຫ່ງ ສ.ປ.ປ. ລາວ ຕາມລະບຽບການ.

7.9 ການປະກອບເອກະສານຄອັດຕາປະທັບ ຂອງ ບັນດາອົງການຈັດຕັ້ງພັກ, ສະຫະພັນນັກຮົບເກົ່າ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

- ການສະເໜີຄອັດຕາປະທັບ ຂອງ ບັນດາອົງການຈັດຕັ້ງພັກ, ສະຫະພັນນັກຮົບເກົ່າ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນສະເໜີເຖິງຂະແໜງການສາຍຕັ້ງຂອງຕົນໂດຍກົງ (ໂດຍບໍ່ຈຳເປັນຕ້ອງໄດ້ສະເໜີຜ່ານຂະແໜງພາຍໃນ);
- ມີໜັງສືສະເໜີ ຂອງ ອົງການຈັດຕັ້ງຕົນ ເຖິງຂັ້ນເທິງຖັດຕົນ;
- ເອກະສານອື່ນທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃຫ້ແຕ່ລະຂັ້ນພິຈາລະນາ.

**8.** ການແບ່ງຂັ້ນຄຸ້ມຄອງການອະນຸມັດຄອັດຕາປະທັບ

8.1 ຕາປະທັບ ປະເພດຕາມົນ ກະຊວງປ້ອງກັນຄວາມສະຫງົບ (ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ) ມີສິດອະນຸມັດຄອັດຕາປະທັບປະເພດຕາມົນ ແລະ ປະເພດອື່ນໄດ້;

8.2 ຕາປະທັບ ປະເພດອື່ນ ທີ່ບໍ່ແມ່ນຕາມົນ: ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງວຽງຈັນ ມີສິດອະນຸມັດຄອັດຕາປະທັບປະເພດອື່ນ ທີ່ບໍ່ແມ່ນຕາມົນ ໄດ້.

## III. ການສະເໜີຄອັດຕາປະທັບຄືນໃໝ່ ກໍລະນີມີການເປ່ເພ, ຫຼູ້ຍຫ້ຽນ ຫຼື ໃຊ້ການບໍ່ໄດ້

**1.** ນຳເອົາໃບອະນຸຍາດ ຫຼື ສຳເນົາໃບອະນຸຍາດຄອັດຕາປະທັບ, (ທີ່ອອກໃຫ້ໂດຍຂະແໜງປ້ອງກັນຄວາມສະຫງົບ) ໂດຍບໍ່ຈຳເປັນຕ້ອງມີເອກະສານ ຫຼື ນິຕິກຳວ່າດ້ວຍການສ້າງຕັ້ງ ຄັດຕິດໄປນຳກໍ່ໄດ້ ເພື່ອສະເໜີຂະແໜງປ້ອງກັນຄວາມສະຫງົບ ຄອັດຕາປະທັບໃໝ່;

**2.** ໜັງສືຢັ້ງຢືນ ພ້ອມທັງສາເຫດ ຂອງການເປ່ເພ, ຫຼູ້ຍຫ້ຽນ ຫຼື ໃຊ້ການບໍ່ໄດ້ຈາກອົງການຈັດຕັ້ງທີ່ຕົນຂຶ້ນກັບ ຕາມແຕ່ລະຂັ້ນ ຫຼື ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

**3.** ການສົ່ງຕາປະທັບເກົ່າ ຕ້ອງປະຕິບັດ ດັ່ງນີ້:

**3.1** ຢູ່ຂັ້ນສູນກາງ: ຕ້ອງເອົາຕາປະທັບເກົ່າ ສົ່ງຄືນໃຫ້ ກະຊວງປ້ອງກັນຄວາມສະຫງົບ (ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ);

**3.2** ຢູ່ຂັ້ນທ້ອງຖິ່ນ: ຕ້ອງເອົາຕາປະທັບເກົ່າ ສົ່ງຄືນໃຫ້ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງວຽງຈັນ ກ່ອນມາຮັບຕາປະທັບໃໝ່. ຖ້າບໍ່ສົ່ງໜ່ວຍເກົ່າ ແມ່ນຈະບໍ່ໄດ້ໜ່ວຍໃໝ່ເດັດຂາດ.

## IV. ການຈັດຕັ້ງປະຕິບັດ

**1)** ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສາສະໜາ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງເສດຖະກິດ ທີ່ມີຕາປະທັບຢູ່ແລ້ວ ແຕ່ຫາກເຫັນວ່າ ບໍ່ສອດຄ່ອງກັບດຳລັດສະບັບເລກທີ 322/ລບ, ລົງວັນທີ 01 ຕຸລາ 2018 ສະເໜີໃຫ້ໄປປ່ຽນນຳກະຊວງປ້ອງກັນຄວາມສະຫງົບ (ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ) ຫຼື ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ (ຕາມການແບ່ງຂັ້ນຄຸ້ມຄອງ) ກ່ອນວັນທີ 01 ຕຸລາ 2021;

**2)** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງເສດຖະກິດ, ອົງການຈັດຕັ້ງສາສະໜາ, ສຳນັກງານຜູ້ຕາງໜ້າ ສ.ປ.ປ. ລາວ ທີ່ປະຈຳຢູ່ຕ່າງປະເທດ ແລະ

ອົງການຈັດຕັ້ງສາກົນ, ສຳນັກງານຜູ້ຕາງໜ້າ ຂອງຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນທີ່ເຄື່ອນໄຫວອອກງານ ປະຈຳຢູ່ ສ.ປ.ປ. ລາວ ຈົ່ງຮັບຮູ້ ແລະ ປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ;

3) ມອບໃຫ້ກົມພັດທະນາການບໍລິຫານລັດ ກະຊວງພາຍໃນ ຮັບຜິດຊອບເປັນເສນາທິການໃຫ້ກະຊວງພາຍໃນ ຕິດຕາມກວດກາ ປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ພ້ອມທັງລາຍງານຂັ້ນເທິງໃນແຕ່ລະໄລຍະ;

4) ການປະຕິບັດຕົວຈິງຖ້າຫາກເຫັນວ່າ ພົບຄວາມຫຍຸ້ງຍາກ, ເນື້ອໃນຈຸດໃດບໍ່ທັນຈະແຈ້ງ, ບໍ່ທັນຄົບຖ້ວນ ຫຼື ເຫັນວ່າ ບໍ່ຈຳເປັນ ໃຫ້ສະເໜີມາຍັງກະຊວງພາຍໃນ ເພື່ອພິຈາລະນາ;

5) ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງເອົາລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ